

# ການລ້ຽງແບ້

ແບ້ເປັນສັດລ້ຽງງ່າຍ ໃຊ້ພື້ນທີ່ໜ້ອຍ ໃຫ້ຜົນຕອບແທນໄວ ລົງທຶນໃນການລ້ຽງຕ່ຳ ຍ້ອນແບ້ກິນອາຫານໄດ້ຫລາຍຊະນິດ ຕະຫລາດຕ້ອງການ ຂາຍໄດ້ລາຄາດີ



## ປັດໃຈຄວາມສຳເລັດໃນການລ້ຽງແບ້

### 1 ພື້ນທີ່ ແລະ ອາຫານແບ້

ເປັນພື້ນທີ່ສູງ ນ້ຳບໍ່ຖ້ວມ, ມີເນື້ອທີ່ປູກພືດອາຫານ ສຳລັບແບ້ ຖ້າລ້ຽງແບ້ 10 ໂຕ ຈະຕ້ອງປູກຫຍ້າ 1 ໄຮ່

### 2 ພັນແບ້

ໂດຍທົ່ວໄປ ນິຍົມລ້ຽງແບ້ພັນພື້ນເມືອງ ແລະ ໃຊ້ພໍ່ພັນແບ້ ລູກປະສົມແອງໂກລນູບຽນ ຫລື ພັນບໍ ເພື່ອປັບປຸງພັນ

### 3 ໂຮງເຮືອນແບ້

ຈະຕ້ອງກັນແສງແດດ ແລະ ຝົນໄດ້ ພາຍໃນຄອກປະກອບມີ ຮາງໃສ່ຫຍ້າ, ຮາງອາຫານເຂັ້ມຂຸ້ນ ແລະ ຮາງນ້ຳ



### 4 ການຈັດການລ້ຽງ

ກ່ຽວຫຍ້າໃຫ້ແບ້ກິນໃນຄອກໃນຊ່ວງເຊົ້າ ແລະ ປ່ອຍລົງຫາກິນຫຍ້າ ໃນສະໜາມຫຍ້າຊ່ວງບ່າຍ 2-3 ຊົ່ວໂມງ ແລ້ວຕ້ອນແບ້ຂຶ້ນຄອກ ໃຫ້ອາຫານເຂັ້ມຂຸ້ນເສີມ ໃຊ້ເວລາລ້ຽງ 1 ປີ ຈະໄດ້ແບ້ນ້ຳໜັກ 20-25 ກິໂລ ຕໍ່ໂຕ ກໍ່ສາມາດຈັບຂາຍໄດ້

### 5 ການຮັກສາສຸຂະພາບແບ້

ຖ່າຍພະຍາດກາຝາກພາຍໃນ ພາຍນອກ 2 ເທື່ອຕໍ່ປີ ສັກຢາປ້ອງກັນພະຍາດປາກເປື່ອຍລົງເລັບ 1 ເທື່ອຕໍ່ປີ



NTPC

ບໍລິສັດໄຟຟ້ານ້ຳເທີນ 2 ຈຳກັດ
ພະແນກສິ່ງແວດລ້ອມ ແລະ ສັງຄົມ
ໂຄງການລຸ່ມເຂື່ອນ ແລະ ເຮືອນຈັກ, ໜ່ວຍງານຟື້ນຟູຊີວິດການເປັນຢູ່

ມີນາ 2013